# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2018

*ທີ່ລັດມິນນີໂຊຕາທ່ານບໍ່ຈຳເປັນຕ້ອງລໍຖ້າຈົນກ່ວາວັນເລືອກຕັ້ງ - ລົງຄະແນນສຽງແຕ່ທຳອິດນີ້ໂດຍໃຊ້ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

## ລົງຄະແນນສຽງແຕ່ທຳອິດໄດ້ດ້ວຍຕົວເອງ

ທ່ານສາມາດລົງຄະແນນໃນບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ສຳນັກງານເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນ 46 ມື້ກ່ອນວັນເລືອກຕັ້ງ ໄປທີ່ mnvotes.org ເພື່ອເບິ່ງຊົ່ວໂມງແລະສະຖານທີ່

## ລົງຄະແນນສຽງແຕ່ທຳອິດທາງໄປສະນີ

ທ່ານຍັງສາມາດສະໝັກຂໍຮັບບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ສົ່ງໃຫ້ທ່ານທາງໄປສະນີ ທ່ານຈະຕ້ອງໄດ້ສົ່ງບັດລົງຄະແນນສຽງຂອງທ່ານຄືນກ່ອນວັນເລືອກຕັ້ງ

① ສະໝັກຂໍຮັບບັດລົງຄະແນນສຽງໄດ້ເວລາໃດກໍໄດ້ໝົດປີທີ່ mnvotes.org ພະນັກງານການເລືອກຕັ້ງຈະສົ່ງເອກກະສານການເລືອກຕັ້ງເມື່ອມີບັດລົງຄະແນນສຽງ (ເບິ່ງຂ້າງຫລັງສຳລັບວັນທີ)

② ອ່ານຄຳແນະນຳທີ່ມາພ້ອມກັບບັດລົງຄະແນນສຽງຂອງທ່ານຢ່າງຄັກແນ່! ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບຖ້າວ່າທ່ານກອກແບບຟອມບໍ່ສົມບູນ.

### *ວັນທີຂອງປີ 2018*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 14 ສິງຫາ*

***ລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼືດ້ວຍຕົວເອງວັນທີ 21 ກັນຍາ ເຖິງ 5 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 16 ຕູລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ 6 ເດືອນພຶດສະຈິກາ*

③ ທ່ານຈະຕ້ອງມີພະຍານເວລາທີ່ທ່ານລົງຄະແນນສຽງແລະຂຽນບັດລົງຄະແນນສຽງຂອງທ່ານ ພະຍານສາມາດເປັນຜູ້ລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນີໂຊຕາຫຼືຈະເປັນໂນທາຣີກໍໄດ້ ພະຍານຂອງທ່ານຕ້ອງໄດ້ເຊັນຊອງຈົດໝາຍລາຍເຊັນແລະບອກທີ່ຢູ່ຂອງເຂົາເຈົ້ານຳ.

④ ຖ້າວ່າທ່ານບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ ທ່ານຈະໄດ້ຮັບຄຳຮ້ອງສະໝັກຈົດທະບຽນໃນເອກກະສານຂອງທ່ານ ຖ້າຈະລົງທະບຽນ ໃຫ້ສະແດງໃຫ້ພະຍານເຫັນບັດປະຈຳຕົວອັນໃດກໍໄດ້ທີ

*ມີຕໍ່ຂ້າງຫລັງ...*

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
*mnvotes.org • 1-877-600-VOTE*

# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2018

*...ຕໍ່ຈາກຂ້າງໜ້າ*

ລະບຸໄວ້ໃນຄຳແນະນຳ ພະຍານຂອງທ່ານຕ້ອງໄດ້ໝາຍໃສ່ຊອງຈົດໝາຍລາຍເຊັນຂອງທ່ານວ່າບັດປະຈຳຕົວອັນໃດທີ່ທ່ານສະແດງໃຫ້ເຂົາເຈົ້າເຫັນ.

⑤ ຫຼັງຈາກທີ່ທ່ານໝາຍແລ້ວໆ ໃຫ້ທ່ານສົ່ງບັດລົງຄະແນນສຽງແລະແບບຟອມກັບຄືນມາທັນທີ ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບ ຖ້າວ່າພວກເຮົາໄດ້ຮັບຫຼັງຈາກວັນເລືອກຕັ້ງ ນອກນັ້ນ ທ່ານຍັງສາມາດສົ່ງບັດລົງຄະແນນສຽງຂອງທ່ານກັບຄືນດ້ວຍຕົວເອງໃຫ້ພະນັກງານການເລືອກຕັ້ງທີ່ສົ່ງບັດລົງຄະແນນສຽງໃຫ້ທ່ານ

## *ຕິດຕາມບັດລົງຄະແນນສຽງຂອງທ່ານ*

ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທຸກບັດທີ່ໄດ້ຮັບທັນເວລາ ແລະກອກແບບຟອມຢ່າງຖືກຕ້ອງຈະຖືກນັບ ໄປທີ່ mnvotes.org ເພື່ອຕິດຕາມສະຖານະພາບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານແລະເພື່ອຢືນຢັນວ່າມັນໄດ້ຮັບແລະຖືກນັບ.

| *ວັນທີປີ 2018* | **ການເລືອກຕັ້ງຂັ້ນຕົ້ນ** | **ການເລືອກຕັ້ງທົ່ວໄປ** |
| --- | --- | --- |
| **ບັດລົງຄະແນນສຽງເລີ່ມຕົ້ນສົ່ງ** | ວັນສຸກ ວັນທີ່ 29 ມິຖຸນາ | ວັນສຸກ ວັນທີ່ 21 ກັນຍາ |
| **ແນະນຳໃຫ້ທ່ານໄດ້ສະໝັກກ່ອນ** | ວັນສຸກ ວັນທີ່ 13 ກໍລະກົດ | ວັນສຸກ ວັນທີ່ 5 ຕຸລາ |
| **ວັນທີບັດລົງຄະແນນສຽງຈະຕ້ອງໄດ້ຮັບ** | ວັນເລືອກຕັ້ງ ວັນອັງຄານ ວັນທີ 14 ສິງຫາ | ວັນເລືອກຕັ້ງ ວັນອັງຄານທີ 6 ພຶດສະຈິກາ |

*ສຳນັກງານລັດຖະມົນຕີ ລັດມິນນິໂຊຕາ*
*mnvotes.org • 1-877-600-VOTE*